# ບົດຮຽນໂຮງຮຽນວັນອາທິດ

**ວັນອາທິດ ທີ 2 ພຶສພາ 2010 (5-2-2010)**

## ຢູ່ໃນພຣະຣັສມີຂອງພຣະເຈົ້າ

**ຂໍ້ພຣະຄັມພີໃນບົດຮຽນ:** ປະຖົມມະການ 1:26-28ກ; 2:7, 15-22

## ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ

ບົດຮຽນນີ້ສາມາດຊ່ວຍທ່ານໃຫ້ເຂົ້າໃຈແລະຕັດສິນໃຈເດັດຂາດຕໍ່ການແຕ່ງງານຊຶ່ງເປັນການອອກແບບຂອງພຣະເຈົ້າ ອັນເປັນສາຍສັມພັນທີ່ສັກສິດລະຫວ່າງຊາຍຜູ້ນຶ່ງກັບຍິງຜູ້ນຶ່ງ.

## ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ບົດຮຽນນີ້ແມ່ນກ່ຽວກັບການທີ່ພຣະເຈົ້າໄດ້ຊົງສ້າງຜູ້ຊາຍແລະຜູ້ຍິງແລະການຊົງຕັ້ງການແຕ່ງງານຂຶ້ນໃຫ້ເປັນສາຍສັມພັນແກ່ພວກເຂົາ.

## ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ປະເພນີເບິ່ງຄືວ່າການແຕ່ງງານເປັນສາຍສັມພັນທີ່ຖືກຕ້ອງຕາມກົດໝາຍທາງດຽວ. ຫຼືເປັນການຜູກມັດຂອງສັງຄົມສຳລັບ"ໃຫ້ທັງສອງຮັກກັນນານເທົ່ານານ." ພຣະຄັມພີສອນວ່າພຣະເຈົ້າໄດ້ສ້າງຕັ້ງການແຕ່ງງານໃຫ້ເປັນສາຍສັມພັນສັກສິດລະຫວ່າງຊາຍຜູ້ນຶ່ງແລະຍິງຜູ້ນຶ່ງ.

ບຽວແລະແຄໂຣໄດ້ມາຫາຂ້າພະເຈົ້າສຳລັບປຶກສາເຣື່ອງການແຕ່ງງານຂອງພວກເຂົາຊຶ່ງຫາກໍສິ້ນສຸດພິທີແຕ່ງງານເມື່ອສອງສາມເດືອນຜ່ານມານີ້. ຂໍ້ຂັດແຍ້ງຂອງພວກເຂົາກໍເລີ້ມຈາກຕອນເລີ້ມຕົ້ນການແຕ່ງງານພຸ້ນ. ຄວາມສັດທາສ່ວນໃຫຍ່ຂອງບຽວແມ່ນຄອບຄົວຂອງລາວ. ແຄໂຣກໍຍັງຢາກອອກໄປທ່ຽວຕາມບາຣ໌ກັບເພື່ອນທີ່ຍັງເປັນໂສດຂອງລາວຢູ່. ພວກເຂົາກໍໄດ້ຖົກຖຽງກັນແລະກໍໄດ້ຜິດກັນ. ທັງສອງກໍຖິ້ມໂທດໃສ່ກັນແລະກັນແລະກໍໄດ້ນຳເອົາຄຳແນະນຳເພື່ອແກ້ໄຂບັນຫາ. ພວກເຂົາທັງສອງກໍອ້າງວ່າເປັນຄຣິສຕຽນແລະເອົາການເອົາງານຢູ່ໃນກຸ່ມນ້ອຍໃນໂບດຂອງພວກເຂົາແລະກໍເລີ້ມຕົ້ນເປັນຜູ້ເຊື່ອທີ່ເຂັ້ມແຂງ. ໂດຍຜ່ານການຮຽນຮູ້ຫຼັກການແຕ່ງງານຂອງພຣະຄັມພີ, ປະສົບການຈະເຣີນເຕີບໂຕສ່ວນຕົວ, ແລະການຊອກຫາທາງທີ່ດີກວ່າໃນການແກ້ໄຂຂໍ້ຂັດແຍ້ງ, ຊີວິດແຕ່ງງານຂອງພວກເຂົາກໍເຂັ້ມແຂງຂຶ້ນ.

ພິທີແຕ່ງງານຂອງຄຣິສຕຽນເລີ້ມຕົ້ນດ້ວຍການຮັບຮູ້ວ່າພວກເຮົາຢູ່ "ໃນພຣະຣັສມີຂອງພຣະເຈົ້າສເມີ." ຂໍ້ຄວາມເຫຼົ່ານີ້ຄວນຈະໜູນໃຈພວກເຮົາໃຫ້ຮັບເອົາແລະດຳເນີນຕາມຊີວິດແຕ່ງງານທີ່ພຣະເຈົ້າໄດ້ອອກແບບໄວ້ໃຫ້. ຄູ່ຜົວເມັຽທີ່ຕັດສິນໃຈຕິດຕາມຫຼັກພື້ນຖານການແຕ່ງງານຂອງພຣະຄັມພີສາມາດມີປະສົບການກັບການຟື້ນຄືນໃໝ່ໃນສາຍສັມພັນຂອງພວກເຂົາ.

## <u>ສຶກສາພຣະຄັມພີ</u>

## 1. <u>ຊາຍແລະຍິງ</u> (ປະຖົມມະການ 1:26-28ກ)

ເລື່ອງຂອງການນິຣະມິດສ້າງ, ໄດ້ຖືກກ່າວໄວ້ຢ່າງສວຍງາມແລະຢ່າງກະທັດຮັດໃນປະຖົມມະການບົດທີ 1, ກັບການລຽງລຳດັບຄຳເວົ້າຂອງການຊົງສ້າງຊີວິດຂອງມະນຸດ.

### ຫ້າທາງທີ່ມະນຸດຄ້າຍຄືກັບພຣະເຈົ້າ

- **ມີສະຕິ**-ພວກເຮົາມີຄວາມສາມາດ/ ມີຄວາມຕ້ອງການໃນການຄິດ.
- **ມີຄວາມຮູ້ສຶກ**-ພວກເຮົາມີຄວາມສາມາດ/ ຕ້ອງການໃນຄວາມຮູ້ສຶກ.
- **ມີວິນຍານ**-ພວກເຮົາມີຄວາມາສາມາດ/ ຢາກສຳຜັດກັບພຣະເຈົ້າ.
- **ສັງຄົມ**-ພວກເຮົາມີຄວາມາສາມາດ/ ຕ້ອງການຊຶ່ງກັນແລະກັນ.
- **ສິດທິ**-ພວກເຮົາມີຄວາມສາມາດ/ ຕ້ອງການໃຫ້ມີທາງເລືອກ.

ທຸກໆສິ່ງທີ່ພຣະເຈົ້າສ້າງຂຶ້ນກໍ **"ປະກາດສະງ່າຣາສີຂອງພຣະເຈົ້າ"** (ເພງສັຣເສີນ 19:1), ແຕ່ວ່າໃນການສ້າງຊີວິດມະນຸດພຣະເຈົ້າໄດ້ຊົງກ່າວວ່າ,**"ໃຫ້ພວກເຮົາສ້າງມະນຸດໃຫ້ມີຮູບຮ່າງຄ້າຍຄືເຮົາເອງ."** ໃນປໂຍກນີ້ແມ່ນໃຊ້ທັງນາມບຸຣຸດທີສາມຈຳນວນຫຼາຍ ແລະບຸຣຸດທີສາມຈຳນວນນ້ອຍສຳລັບພຣະເຈົ້າ-ຄ້າຍຄືພວກເຮົາແລະ**ຄ້າຍຄືພຣະອົງເອງ**-ການເລັງໃຫ້ເຫັນຕຣີເອກການຸພາບແລະການເປັນນຶ່ງດຽວກັນແລະພາກສ່ວນໃນພຣະເຈົ້າ. ທີ່ມີຮູບຮ່າງຄ້າຍຄືພຣະເຈົ້າໝາຍຄວາມວ່າຊີວິດມະນຸດແມ່ນໄດ້ສ້າງຂຶ້ນກັບນິສັຍທາງສິນທັມ, ຄວາມສລຽວສລາດ, ແລະຄວາມສາມາດໃນການສາມັກຄີທັມກັບພຣະເຈົ້າ, ແລະເປັນແສງສະທ້ອນຕໍ່ໜ້າທີ່ຮັບຜິດຊອບຊຶ່ງໄດ້ຖືກມອບໃຫ້ຈາກເບື້ອງເທິງໃຫ້ປົກຄອງເໜືອການຊົງສ້າງໃນຖານະເປັນຜູ້ຕາງໜ້າຂອງພຣະເຈົ້າ (ປະຖົມມະການ 1:28).

ໃນພາສາເຮັບເຣີຄຳວ່າຊາຍແລະຍິງ(ບໍ່ແມ່ນຜູ້ຊາຍແລະຜູ້ຍິງ)ຊຶ່ງບອກເຖິງເພດຂອງມະນຸດທີ່ພຣະເຈົ້າໄດ້ຊົງສ້າງຂຶ້ນມາ. ພຣະເຈົ້າ**ໄດ້ອວຍພອນພວກເຂົາ**, ຊຶ່ງໝາຍຄວາມວ່າພຣະອົງໄດ້ຍອມສະລະໃຫ້ພວກເຂົາມີຈຸດປະສົງທີ່ຈະເຮັດໃຫ້ເປົ້າໝາຍສຳເຣັດຄົບເຕັມຄືການ**ອອກແມ່ແຜ່ລູກ**ແລະໃຫ້ມີ**ມາກມາຍຫຼາຍຂຶ້ນ**. ນີ້ແມ່ນເລັງເຖິງບໍ່ພຽງແຕ່ຄວາມສາມາດທາງຝ່າຍຮ່າງກາຍທີ່ຈະມີລູກໆ, ແຕ່ຍັງເລັງເຖິງນິສັຍໃນທາງສິນທັມແລະຄວາມສາມາດເຮັດວຽກຮ່ວມກັນໃນການລ້ຽງລູກໆອີກດ້ວຍ. ມະນຸດຈະ**ມີເຕັມໂລກນີ້**, ບໍ່ແມ່ນໃນການຂັດແຍ່ງກັບຊຶ່ງກັນແລະກັນຫຼືກັບທັມະຊາດ, ແຕ່ວ່າ**ປາບປາມມັນ**-ຄືການຮັບໃຊ້ໃນຖານະເປັນຕົວແທນຂອງພຣະເຈົ້າຊຶ່ງປົກຄອງເໜືອສັພສິ່ງທີ່ໄດ້ຊົງສ້າງຂຶ້ນມາ.

ການເຫັນພາບພົດຄວາມເປັນມາຢ່າງຫຍໍ້ໆຂອງຊີວິດມະນຸດກໍເປີດເຜີຍໃຫ້ເຫັນວ່າພຣະເຈົ້າໄດ້ຕັ້ງການແຕ່ງງານຂຶ້ນລະຫວ່າງຊາຍແລະຍິງ, ທີ່ພຣະອົງໄດ້ສ້າງແລະໄດ້ອວຍພອນທາງເພດໃຫ້ລະຫວ່າງຜົວແລະເມັຽ. ຄູ່ແຕ່ງງານທີ່ບໍ່ມີລູກກໍບໍ່ຖືວ່າໄຮ້ປໂຍດ ຫຼືເປັນຄອບຄົວທີ່ມີຄ່າໜ້ອຍກວ່າຄູ່ແຕ່ງງານທີ່ມີລູກ. ແຕ່ວ່າ, ການອອກແບບຂອງພຣະເຈົ້າ, ລູກເຕົ້າແມ່ນໝາກຜົນຂອງການຢູ່ດ້ວຍກັນໃນການແຕ່ງງານ, ເພື່ອນຳມາໃນຄອບຄົວທີ່ເອົາຄວາມຄ້າຍຄືຂອງພຣະເຈົ້າເຂົ້າມາສູ່ທຸກໆສະຖານະການແລະສາຍສັມພັນ. ໂດຍແມ່ນຄວາມບາບນັ້ນທີ່ໄດ້ທຳລາຍຄວາມຄ້າຍຄືອັນຕົ້ນເດີມນັ້ນ, ຈົນເຖິງປັດຈຸບັນນີ້, ພວກເຮົາພົບວ່າການຊົງໄຖ່ໃຫ້ພົ້ນໂດຍຜ່ານພຣະຄຣິດເປັນບ່ອນເລີ້ມຕົ້ນຂັ້ນຕອນຂອງການສ້າງພວກເຮົາຂຶ້ນໃໝ່ໃຫ້ຄ້າຍຄືພຣະຄຣິດຝ່າຍວິນຍານ, ແລະນຳທາງສິນທັມຄືນມາ, ເປົ້າໝາຍ, ແລະສັນຕິສຸກສຳລັບຄອບຄົວທີ່ຕ້ອງການທີ່ຈະເຮັດໃຫ້ເປົ້າໝາຍຂອງຄອບຄົວສຳເຣັດ.

## 2. <u>ບາງຢ່າງທີ່ຂາດເຂີນໃນທີ່ສຸກຂະເສີມ</u> (ປະຖົມມະການ 2:7,15-20)

ໃນບົດທີສອງຂອງພຣະທັມປະຖົມມະການແມ່ນບົດທີ່ເຮັດໃຫ້ເລື່ອງຄົບເຕັມແລະລາຍລະອຽດອີກຫຼາຍຢ່າງຂອງການຊົງສ້າງຊີວິດມະນຸດ. ພຣະເຈົ້າໄດ້ປັ້ນຊາຍຜູ້ນຶ່ງ, ເໝືອນຊ່າງປັ້ນໝໍ້ກັບດິນໜຽວ, ຈາກດິນທົ່ວໄປ. ພຣະເຈົ້າ

ເປົ່າລົມຫັນໃຈໃຫ້ມີຊີວິດໃສ່ຮູດັງຂອງອາດາມ ແລະລາວກໍກາຍເປັນສິ່ງທີ່ມີຊີວິດ.   ລາວໄດ້ຖືກມອບໝາຍວຽກທີ່ມີຄວາມໝາຍໃຫ້ເຮັດແລະສວນທີ່ສວຍງາມໃຫ້ເປັນບ່ອນຢູ່ອາສັຍ.

ກົດຣະບຽບຂໍ້ນຶ່ງໄດ້ຖືກມອບໃຫ້, ຄືມະນຸດຈະຕ້ອງບໍ່ກິນໝາກໄມ້ຈາກຕົ້ນທີ່ໃຫ້ຮູ້ຈັກຄວາມດີແລະຄວາມຊົ່ວ, ເພື່ອວ່າເມື່ອລາວຫາກໄດ້ກິນລາວຈະຕ້ອງຕາຍຢ່າງແນ່ນອນ. ຕົ້ນໄມ້ໄດ້ຕັ້ງຢູ່ທີ່ນັ້ນເພື່ອອາດາມຈະມີທາງເລືອກໃນການຊອກຫາຄວາມສົມບູນສ່ວນຕົວຈາກການຢູ່ໃຕ້ຄໍາສັ່ງຂອງການຖືກຊົງສ້າງໃນການຕັດສິນໃຈຂອງຜູ້ຊົງສ້າງ.

ອາດາມຢູ່ຢ່າງໂດດດ່ຽວ, ແລະພຣະເຈົ້າບອກວ່າ"ບໍ່ເປັນການດີ." ກິຈການສ້າງມະນຸດຂອງພຣະເຈົ້າຍັງບໍ່ໄດ້ສໍາເຣັດໃນຂັ້ນຕອນນີ້ເທື່ອ: ພຣະເຈົ້າໄດ້ສ້າງສາຍສັມພັນໃຫ້ເປັນຄວາມຕ້ອງການຂອງມະນຸດຊຶ່ງພວກສັດທັງຫຼາຍບໍ່ອາດຈະຕອບສນອງໃຫ້ໄດ້. ບັນຫາທີ່ໄດ້ເຫັນນັ້ນຄືຕ້ອງການເນື້ອຄູ່.

ມີຫຼາຍໆສັງຄົມຂອງພວກທີ່ບໍ່ເຊື່ອພຣະເຈົ້າ ໃນສມັຍຂອງພຣະຄັມພີເຫັນຄຸນຄ່າຂອງພວກຜູ້ຍິງກໍພຽງແຕ່ມີໜ້າທີ່ໃນການມີລູກເທົ່ານັ້ນ. ເຣື່ອງຣາວໃນພຣະຄັມພີເປີດເຜີຍໃຫ້ເຫັນແນວຄິດຂອງພຣະເຈົ້າທີ່ໃຫ້ຄຸນຄ່າແກ່ພວກຜູ້ຍິງ. ອາດາມຕ້ອງການຜູ້ຊ່ວຍທີ່ຄືກັນກັບລາວ. ຄວາມໝາຍທີ່ແປຄໍາວ່າ ຜູ້ຊ່ວຍ ມັນບໍ່ແມ່ນແປໄປໃນທາງເສັຍຫາຍເລີຍ. ມີຫຼາຍໆຄົນໃນສມັຍພຣະຄັມພີພາກພຣະສັນຍາເດີມໄດ້ໃສ່ຊື່ເອັຊຣາ, ຫຼື "ຜູ້ຊ່ວຍ" (ປະຖົມມະການ 36:21; 1 ຂ່າວຄາວ 12:9; ເນເຫມີຢາ 3:19). ຄໍາເວົ້ານີ້ໃນພຣະຄັມພີສ່ວນຫຼາຍແລ້ວແມ່ນເລັງເຖິງພຣະເຈົ້າ; ອົບພະຍົບ 18:4 ເວົ້າວ່າ, "ພຣະເຈົ້າຂອງບິດາຂ້າພະເຈົ້າເປັນຜູ້ຊ່ວຍຊູຂ້າພະເຈົ້າ."

"ພຣະເຈົ້າກ່າວເຖິງພຣະອົງເອງວ່າເປັນຜູ້ຊ່ວຍໄພ່ພົນຂອງພຣະອົງ. ພຣະເຢຊູໄດ້ເວົ້າວ່າພຣະອົງໄດ້ມາເພື່ອຮັບໃຊ້ຄົນອື່ນບໍ່ແມ່ນໃຫ້ຄົນອື່ນຮັບໃຊ້ຕົນ (ມັດທາຍ 20:28), ແລະເປັນແບບຢ່າງອັນດີເລີດຂອງຄຣິສຕຽນໃຫ້ມີນິສັຍຕໍ່ຄົນອື່ນຄືນິສັຍເປັນຜູ້ຊ່ວຍ.... ນຶ່ງໃນຂອງຂວັນຈາກພຣະວິນຍານແມ່ນຂອງຂວັນຂອງການຊ່ວຍເຫຼືອ(1 ໂກຣິນໂທ 12:28). ຢ່າເຂົ້າໃຈຜິດ: ການເປັນຜູ້ຊ່ວຍແມ່ນຕໍາແໜ່ງທີ່ຖືກຍົກຍ້ອງສັຣເສີນຈາກທັສນະຂອງພຣະເຈົ້າ"

ຈາກຕອນເລີ້ມຕົ້ນ, ເມື່ອອາດາມຕ້ອງການເພື່ອນ, ພຣະເຈົ້າໄດ້ສ້າງຜູ້ຍິງແລະບໍ່ໄດ້ເອົາຜູ້ຊາຍໃຫ້ລາວ. ພຣະເຈົ້າໄດ້ສ້າງເພດທີ່ແຕກຕ່າງກັນແຕ່ຕ້ອງການຊຶ່ງກັນແລະກັນລະຫວ່າງຜູ້ຊາຍແລະຜູ້ຍິງ, ແລະພວກເຂົາກໍຈະເຮັດໃຫ້ຊຶ່ງກັນແລະກັນຄົບຖ້ວນສົມບູນ-ຊຶ່ງຜົນຂອງມັນຄືການເປັນເພື່ອນຄູ່ຄອງແລະຄວາມໃກ້ຊິດກັນ. ພວກເຖິງກະສຽນທີ່ໄດ້ຖືກປະທານພອນສວັນບໍ່ໃຫ້ແຕ່ງງານ, ຫຼືຜູ້ໄດ້ຖືກຢ່າຮ້າງຫຼືຜູ້ທີ່ເປັນໝ້າຍ, ກໍຍັງຕ້ອງການເພື່ອນ, ຄືຢາກຢູ່ກັບຄົນອື່ນໆ. ຄວາມຕ້ອງການອັນນີ້ແມ່ນຈະພົບໄດ້ທີ່ຄອບຄົວໂບດທີ່ເຕັມດ້ວຍຄວາມອົບອຸ່ນແລະຄວາມຮັກ.

## 3. ຂນະທີ່ລາວຍັງນອນຫຼັບຢູ່ (ປະຖົມມະການ 2:21-22)

ພຣະເຈົ້າໄດ້ໂຜດປະທານເພື່ອນເພື່ອຕອບສນອງຄວາມຕ້ອງການຂອງອາດາມ ໂດຍການສ້າງນາງເອວາ. ພຣະເຈົ້າໄດ້ເຮັດໃຫ້ອາດາມນອນຫຼັບສນິດ (ຊຶ່ງລາວບໍ່ສາມາດຈະບອກພຣະເຈົ້າໄດ້ວ່າຄວນຈະສ້າງຜູ້ຍິງໃຫ້ເປັນແນວໃດ). ພຣະເຈົ້າເຮັດໃຫ້ຄວາມຕ້ອງການຂອງອາດາມສໍາເຣັດໃນທາງຂອງພຣະອົງ, ຊຶ່ງບອກພວກເຮົາໃຫ້ນັບຖືການແຕ່ງງານຊຶ່ງເປັນສາຍສັມພັນທີ່ພຣະເຈົ້າຊົງສ້າງຂຶ້ນແລະບໍ່ແມ່ນສິ່ງທີ່ສັງຄົມມະນຸດກໍ່ຕັ້ງຂຶ້ນເອງ. ເອວາໄດ້ຖືກສ້າງຈາກກະດູກຂ້າງຂອງອາດາມ; ຝ່າຍຮ່າງກາຍພວກເຂົາກໍມາຈາກເລືອດເນື້ອອັນດຽວກັນ, ຊຶ່ງເລັງໃຫ້ເຫັນຄວາມເປັນນຶ່ງດຽວກັນຂອງຄອບຄົວມະນຸດ. ຫຼັງຈາກນັ້ນພຣະເຈົ້າກໍໄດ້ນໍານາງມາໃຫ້ຜູ້ຊາຍ.

ພຣະເຈົ້າເປັນຜູ້ຈັບຄູ່ໃນການແຕ່ງງານຂອງຄູ່ທໍາອິດ, ເປັນພໍ່ຂອງເຈົ້າສາວຄົນທໍາອິດ, ແລະເປັນຜູ້ທໍາພິທີການແຕ່ງງານຄັ້ງທໍາອິດ. ພວກເຮົາຈະຄົ້ນຄວ້າຂໍ້ທີ 23-25 ໃນບົດຮຽນຂອງອາທິດໜ້າ.

ເອວາໄດ້ມີຄຸນຄ່າໃນຕົວລາວ-ບໍ່ແມ່ນສໍາລັບການມີລູກຫຼືຊ່ວຍໄດ້ຫຼາຍຢ່າງໃນການຮັກສາສວນ. ໂດຍຜ່ານຫຼາຍສັດຕະວັດມີຫຼາຍຄົນໄດ້ແນະນໍາວ່າກະດູກຂ້າງແມ່ນສັນຍາລັກຂອງການເປັນເພື່ອນຮ່ວມງານກັນ, ບໍ່ແມ່ນເອົາ

ກະດູກຈາກຫົວເພື່ອໃຫ້ປົກຄອງເໜືອຜູ້ຊາຍຫຼືບໍ່ເອົາມາຈາກຕີນເພື່ອຈະບໍ່ໃຫ້ຜູ້ຊາຍຢຽບເອົາ. ເພື່ອນຮ່ວມງານແມ່ນເລັງໃຫ້ເຫັນຢ່າງຈະແຈ້ງໃນພຣະຄັມພີ, ທີ່ສາວົກໂປໂລໄດ້ຂຽນໄວ້ວ່າ, “ຈົ່ງຍອມຟັງຊຶ່ງກັນແລະກັນໃນຄວາມຢຳເກງພຣະຄຣິດ” (ເອເຟໂຊ 5:21). ການເປັນຜູ້ນຳຂອງຜົວໃນຊີວິດແຕ່ງງານແມ່ນໃຫ້ປາກົດອອກເໝືອນເປັນຜູ້ຮັບໃຊ້ໃນການເປັນເພື່ອນຮ່ວມງານຫຼືການຍອມຟັງກັນທັງສອງຝ່າຍ, ການສຳພັນກັບເມັຽຂອງລາວດ້ວຍຄວາມຮັກທັງໝົດ, ຄວາມນຸ້ມນວນ, ເຫັນບຸນຄຸນ, ແລະນັບຖື.

ພວກເຮົາເປັນຜູ້ສລາດຖ້າວ່າພວກເຮົາຫາກອະນຸຍາດໃຫ້ແຜນການຂອງພຣະເຈົ້າທີ່ກ່ຽວຂ້ອງກັບສາຍສັມພັນຂອງພວກເຮົາ ບໍ່ໃຫ້ປິດໃນທາງຂອງພຣະອົງແລະໃນເວລາຂອງພຣະອົງ, ເໝືອນມີຄຳກ່າວໄວ້ວ່າ, “ຄົນໂງ່ຟ້າວແລ່ນເຂົ້າໃນບ່ອນທີ່ເທວະດາຢ້ານທີ່ຈະຍືນຢູ່.” ເໝືອນດັ່ງທີ່ອາດາມຄອງຄອຍການຊົງປະທານເອວາຈາກພຣະເຈົ້າ, ພວກເຮົາກໍເປັນຄົນສລາດຖ້າວ່າພວກເຮົາຫາກບໍ່ຟ້າວໂດດເຂົ້າໃນການແຕ່ງງານ, ແຕ່ວ່າໃຫ້ພຣະເຈົ້າເປັນຜູ້ນຳພາແລະປະທານທຸກຢ່າງໃນທຸກໆຂັ້ນຕອນ. ການອອກແບບຂອງພຣະເຈົ້າກໍຄືວ່າການແຕ່ງງານຂອງຄຣິສຕຽນແມ່ນ“ຢູ່ໃນອົງພຣະຜູ້ເປັນເຈົ້າ” (1 ໂກຣິນໂທ 7:39) ຊຶ່ງໝາຍຄວາມວ່າພວກເຂົາແຕ່ງງານກັບພວກທີ່ຕັດສິນໃຈເດັດດ່ຽວເຊື່ອໃນພຣະຄຣິດ. ແຕ່ວ່າທີ່ພວກເຮົາແຕ່ງງານມາດົນແລ້ວ, ກໍເຫັນວ່າຄູ່ຄອງຂອງພວກເຮົາເປັນຜູ້ຊຶ່ງຖືກສ້າງມາພິເສດຈາກພຣະເຈົ້າແລະການໃຫ້ຄຸນຄ່າສຳລັບຕົວຊຶ່ງກັນແລະກັນຈະເຮັດໃຫ້ຄວາມຮັກຂອງພວກເຮົາໜັກແໜ້ນແລະຕັດສິນໃຈເດັດດ່ຽວຕໍ່ກັນແລະກັນ.

## <u>ບົດຮຽນຊີວິດ</u>

ການແຕ່ງງານບໍ່ແມ່ນສິ່ງທີ່ມະນຸດສ້າງຕັ້ງຂຶ້ນ, ແຕ່ວ່າແມ່ນສາຍສັມພັນອັນສັກສິດທີ່ພຣະເຈົ້າໄດ້ສ້າງຂຶ້ນລະຫວ່າງຊາຍຜູ້ນຶ່ງແລະຍິງຜູ້ນຶ່ງ ຕັດສິນໃຈແນ້ວແນ່ຕໍ່ກັນແລະກັນໃນຖານະເປັນເພື່ອນຄູ່ຮັກກັນໃຫ້ນານເທົ່ານານຈົນໝົດຊີວິດຂອງທັງສອງ. ຄູ່ແຕ່ງງານໃດທີ່ເຂົ້າໃຈແລະເຮັດຕາມການອອກແບບຂອງພຣະເຈົ້າກໍສາມາດປະສົບການກັບການແຕ່ງງານທີ່ຟື້ນຄືນມາໃໝ່ຂອງພວກເຂົາ.

ພວກເຮົາຈະສາມາດຕັດສິນໃຈຕິດຕາມການອອກແບບແຕ່ງງານອັນຕົ້ນເດີມຂອງພຣະເຈົ້າໄດ້ຢ່າງໃດ?

- ໂດຍການເຕີບໃຫຍ່ຂຶ້ນຝ່າຍຈິດວິນຍານ: ເຖິງແມ່ນວ່າບາບໄດ້ປົກບັງພຣະລັກສະນະຂອງພຣະເຈົ້າໃນຊີວິດມະນຸດ, ໂດຍຜ່ານພຣະຄຣິດພຣະເຈົ້າໄດ້ປ່ຽນແປງພວກເຮົາເຂົ້າໃນຄວາມຄ້າຍຄືພຣະອົງຝ່າຍວິນຍານ. ຈົ່ງໃຫ້ລັກສະນະຂອງພຣະຄຣິດເປັນຈຸດສູນກາງອັນມີຄ່າສູງໃນບ້ານເຮືອນຂອງທ່ານ. ໃຊ້ເວລາກັບພຣະເຈົ້າໃນການອຸທິດຕົນໃນຖານະສ່ວນຕົວແລະໃນຖານະເປັນຄອບຄົວ. ສົມທຽບຈຳນວນການດຶງດູດຂອງຝ່າຍໂລກໃນເຮືອນຂອງທ່ານເຊັ່ນ(ໂທຣະທັດ, ປຶ້ມ, ເພື່ອນຝູງ, ດົນຕຣີແລະອື່ນໆ.) ກັບຈຳນວນການດຶງດູດຝ່າຍຄຣິສຕຽນ.
- ໂດຍການຊ່ວຍເຫຼືອຊຶ່ງກັນແລະກັນໃຫ້ຄົບຖ້ວນໂດຍຜ່ານການເປັນເພື່ອນຄູ່ຮັກ: ໃຊ້ເວລາທີ່ເປັນປໂຍດແລະໃຊ້ເວລາໃຫ້ຫຼາຍໆກັບຄູ່ຄອງຂອງທ່ານ.
- ໂດຍການນັບຖືຊຶ່ງກັນແລະກັນ: ໃນຊີວິດແຕ່ງງານທີ່ສົມບູນດີຄູ່ຄອງໄດ້ໃຫ້ຄຸນຄ່າຊຶ່ງກັນແລະກັນ, ບໍ່ພຽງແຕ່ສິ່ງທີ່ພວກເຂົາໄດ້ເຮັດເທົ່ານັ້ນ. ຈົ່ງຂຽນໜັງສືບັນລະຍາຍເຖິງເຫດຜົນທີ່ວ່າເປັນຫຍັງທ່ານຈຶ່ງຕັດສິນໃຈແລະປິຕິຍິນດີທີ່ໄດ້ແຕ່ງງານກັບຄູ່ຄອງຂອງຕົນ.

ອຸປຖຳໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA